ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------&&&---------

ນະຄອນຫຼວງວຽງຈັນ

ເລກທີ: 0689 /ຈນວ.

ວັນທີ: 13 JUL 2018

# ຂໍ້ຕົກລົງ
# ວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບພືດ
# ຢູ່ໃນນະຄອນຫຼວງວຽງຈັນ

- ອີງຕາມມາດຕາ 19, 20 ໝວດທີ IV ຂອງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມມາດຕາ 5 ຂອງກົດໝາຍວ່າດ້ວຍການປ້ອງກັນພືດ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 031/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມມາດຕາ 52 ຂອງກົດໝາຍວ່າດ້ວຍອາຫານ ສະບັບເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0115/ກປ, ລົງວັນທີ 27 ມັງກອນ 2011 ວ່າດ້ວຍມາດຕະຖານກະສິກຳທີ່ດີ;
- ອີງຕາມມະຕິຕົກລົງ ຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນ ນະຄອນຫຼວງວຽງຈັນ, ຊຸດທີ I, ສະບັບເລກທີ 06 ພະຈິກ 2017 ວ່າດ້ວຍ ການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດຢູ່ໃນນະຄອນຫຼວງວຽງຈັນ

**ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 01 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ເປັນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປ້ອງກັນພືດ ແລະ ການກັກກັນພືດ (ສະບັບປັບປຸງ) ແລະ ຂໍ້ຕົກລົງຂອງລັດຖະມົນຕີກະຊວງກະສິກຳ-ປ່າໄມ້ ວ່າດ້ວຍມາດຕະຖານກະສິກຳອິນຊີ, ມາດຖານກະສິກຳທີ່ດີ ແລະ ຄວາມປອດໄພຂອງຜົນຜະລິດ ແນໃສ່ສົ່ງເສີມຄຸນນະພາບພືດ ແລະ ຜະລິດຕະພັນພືດ ທີ່ຜະລິດຢູ່ພາຍໃນ ຫຼື ນຳເຂົ້າຈາກຕ່າງແຂວງກໍຄືຈາກຕ່າງປະເທດມາເພື່ອຈຳໜ່າຍ ຢູ່ນະຄອນຫຼວງວຽງຈັນ, ມີຄຸນນະພາບຖືກຕ້ອງຕາມຫຼັກໂພສະນາການ ທັງຮັບປະກັນໃຫ້ຜູ້

ບໍລິໂພກສາມາດຊົມໃຊ້ສິນຄ້າທີ່ມີຄວາມປອດໄພ ແລະ ສາມາດບໍລິໂພກອາຫານສະອາດ ທັງເປັນການແຂ່ງຂັນກັບສິນຄ້າຕ່າງປະເທດໄດ້.

ມາດຕາ 02 ນິຍາມ

ການສົ່ງເສີມ ແລະ ການຄຸ້ມຄອງຄຸນນະພາບພືດແມ່ນການກະຕຸກຊຸກຍູ້ຜູ້ປະກອບການໃຫ້ຕັ້ງໜ້າແຂ່ງຂັນ ຂະຫຍາຍການຜະລິດ ແລະ ການຈຳໜ່າຍສິນຄ້າປະເພດພືດທັນເຂົ້າສູ່ມາດຕະຖານແຫ່ງຊາດ ແລະ ສາກົນ (ISO 22000 2005) ເລີ່ມແຕ່ຫົວທີ ຈົນໄປເຖິງຂອດຈຳໜ່າຍທັງເປັນການປົກປ້ອງ ແລະ ຮັບປະກັນຫຼັກສຸຂາອະນາໄມໃຫ້ຜູ້ບໍລິໂພກ;

ມາດຕາ 03 **ອະທິບາຍຄຳສັບໃນຂໍ້ຕົກລົງສະບັບນີ້**

1. ການຄຸ້ມຄອງຄຸນນະພາບພືດ ໝາຍເຖິງການຄວບຄຸມຄຸນນະພາບພືດເລີ່ມຕັ້ງແຕ່ການກຽມດິນ ການປູກ, ການບົວລະບັດຮັກສາ, ການຈັດການຫຼັງເກັບກ່ຽວ ຈົນຮອດຂະບວນການປຸງແຕ່ງ ແລະ ຈຳໜ່າຍໃຫ້ຖືກຕ້ອງຕາມຫຼັກໂພສະນາການ, ຮັບປະກັນຄວາມສະອາດ ແລະ ຄວາມປອດໄພໃຫ້ແກ່ຜູ້ບໍລິໂພກ.

2. ການສົ່ງເສີມຄຸນນະພາບພືດ ໝາຍເຖິງການແນະນຳໃຫ້ຄວາມຮູ້ ສ້າງເງື່ອນໄຂສະດວກ ແລະ ການສະໜັບສະໜູນຂອງພາກລັດ ແລະ ອົງກອນຄຸ້ມຄອງ ໃຫ້ຜູ້ມີຈຸດປະສົງຢາກຜູກ ແລະ ຈຳໜ່າຍພືດຕາມມາດຕະຖານທາງການວາງອອກ

3. ຜະລິດຕະພັນພືດ ໝາຍເຖິງຜົນຜະລິດຈາກພືດທີ່ໄດ້ຜ່ານຂະບວນການປຸງແຕ່ງຂັ້ນຕົ້ນ ເພື່ອຈຳໜ່າຍໃນຫ້າງຮ້ານ ແລະ ຕະຫລາດ;

4. ອົງການກວດກາມາດຖານພືດ ໝາຍເຖິງອົງການຈັດຕັ້ງທີ່ສ້າງຕັ້ງໂດຍການອະນຸມັດຈາກພາກລັດ ເພື່ອເຮັດໜ້າທີ່ກວດກາການປະຕິບັດໜ້າທີ່ຂອງໜ່ວຍກວດກາ, ຜູ້ປະກອບການ ແລະ ໃຫ້ຄວາມຮູ້ດ້ານກົດໝາຍປະເພດສິນຄ້າກະສິກຳ;

5. ສູນກວດກາພືດ ໝາຍເຖິງສະຖານີທາງການກວດກາມາດຖານພືດ ທັງຜະລິດຢູ່ພາຍໃນ ແລະ ນຳເຂົ້າຈຳໜ່າຍ;

6. ສານພິດຕົກຄ້າງ ໝາຍເຖິງສານປະກອບສະເພາະໃດໜຶ່ງ ຂອງຢາປາບສັດຕູພືດທີ່ຕົກຄ້າງຢູ່ໃນພືດ , ດິນ, ນ້ຳ, ອາຫານ, ສິນຄ້າກະສິກຳ, ທີ່ເກີນຄ່າມາດຕະຖານຕາມການກຳນົດ ຂອງກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ກະຊວງວິທະຍາສາດ, ກະຊວງວິທະຍາສາດ ແລະ ສິ່ງແວດລ້ອມ ແລະ ອົງການຈັດຕັ້ງສາກົນ;

7. ຄວາມປອດໄພການບໍລິໂພກ ໝາຍເຖິງພືດ ແລະ ຜະລິດຕະພັນພືດທີ່ນຳມາຈຳໜ່າຍໃຫ້ກັບຜູ້ບໍລິໂພກມີຄວາມສະອາດ, ບໍ່ມີສານພິດຕົກຄ້າງ ຫຼື ຕົກຄ້າງໃນລະດັບຕ່ຳ, ບໍ່ມີເຊື້ອພະຍາດຕິດແປດ ສາມາດນຳມາບໍລິໂພກ ໂດຍບໍ່ກໍ່ໃຫ້ເກີດຜົນກະທົບຕໍ່ສຸຂະພາບຂອງມະນຸດ ແລະ ສິ່ງແວດລ້ອມ;

8. ຄຸນນະພາບພືດ ໝາຍເຖິງຜົນຜະລິດທີ່ໄດ້ຈາກການປູກພືດ ແລະ ເຕັກນິກ ການເກັບຮັກສາພືດທີ່ຖືກຕ້ອງຕາມຫຼັກວິຊາການ, ມີຄວາມສະອາດ ແລະ ປອດໄພຕໍ່ຜູ້ບໍລິໂພກ;

9. ການວິໄຈ ໝາຍເຖິງການນຳເອົາພືດ ແລະ ຜະລິດຕະພັນພືດ ມາທົດສອບເພື່ອກວດເບິ່ງລະດັບ

ສານ ພິດຕົກຄ້າງໃນພືດ ແລະ ຜະລິດຕະພັນພືດ.

**ມາດຕາ 04 ນະໂຍບາຍຂອງລັດ ກ່ຽວກັບການສົ່ງເສີມ, ຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ**

1. ລັດປຸກລະດົມ ແລະ ສົ່ງເສີມຊາວກະສິກອນ, ນັກທຸລະກິດ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ດຳເນີນການປູກ, ປຸງແຕ່ງ ແລະ ເກັບຮັກສາຜະລິດຕະພັນພືດ, ແນະນຳການບໍລິໂພກຖືກຕາມຫຼັກໂພສະນາການເພື່ອບັນລຸມາດຕະຖານແຫ່ງຊາດ ແລະ ມາດຕະຖານສາກົນ;
2. ຊຸກຍູ້ສົ່ງເສີມການປູກພືດຂອງຊາວກະສິກອນ, ຜູ້ປະກອບການ ແລະ ນັກທຸລະກິດ ໃຫ້ມີການຜະລິດລວມໝູ່ (ຈຸລະວິສາຫະກິດ MME), ເປັນຟາມຂະໜາດນ້ອຍ ແລະ ຂະໜາດປານກາງ (SME), ໜຶ່ງເມືອງໜຶ່ງຜະລິດຕະພັນ ແລະ ມີລະບົບການປຸງແຕ່ງ, ການເກັບຮັກສາ ແລະ ການຈຳໜ່າຍທີ່ສີວິໄລ;
3. ສົ່ງເສີມຊາວ ນະຄອນຫຼວງວຽງຈັນ ຜະລິດອາຫານວຽງຈັນ, ອາຫານລາວ ດ້ວຍຍີ່ຫໍ້ທີ່ຍືນຍົງ, ທັງມີມາດຖານ ສາມາດແຂ່ງຂັນກັບສິນຄ້າປະເພດດຽວກັນກັບປະເທດອ້ອມຂ້າງ; ລັດສົ່ງເສີມຢ່າງຕັ້ງໜ້າໃນການບໍລິໂພກເຂົ້າ, ພືດຜັກ, ໝາກໄມ້, ຊີ້ນ ແລະ ປາ ໃຫ້ໄດ້ຕາມມາດຕະຖານກະສິກຳສະອາດ ແລະ ມາດຕະຖານອິນຊີ;
4. ຊຸກຍູ້ສົ່ງເສີມຊາວກະສິກອນ, ຜູ້ປະກອບການພາຍໃນນະຄອນຫຼວງວຽງຈັນ ແລະ ນັກລົງທຶນຕ່າງປະເທດ ນຳໃຊ້ອຸປະກອນ, ເຄື່ອງມື ແລະ ເຕັກນິກໃໝ່ເຂົ້າໃນການຜະລິດ ແລະ ປຸງແຕ່ງຜະລິດຕະພັນພືດ.

**ມາດຕາ 05 ຫຼັກການພື້ນຖານກ່ຽວກັບການສົ່ງເສີມ, ຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ**

ການຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ຢູ່ທ້ອງຕະຫຼາດໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຄຸ້ມຄອງຕາມມາດຖານ ແລະ ເງື່ອນໄຂຂອງການຜະລິດ, ການປຸງແຕ່ງ, ການຮັກສາຊະນິດພືດ ທີ່ຜະລິດອອກ;
2. ຄຸ້ມຄອງສະຖານທີ່ຈຳໜ່າຍພືດ ແລະ ຜະລິດຕະພັນພືດ ຫຼື ຕະຫຼາດຈຳໜ່າຍ ຕາມມາດຖານຂອງຕະຫຼາດປະເພດຕ່າງໆ ເປັນຕົ້ນຕະຫຼາດກະສິກຳສະອາດ ແລະ ພືດອິນຊີ;
3. ການມີສ່ວນຮ່ວມຂອງກຸ່ມການຜະລິດ ແລະ ຜູ້ປະກອບການ ເພື່ອຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ເພື່ອຈຳໜ່າຍໃນທ້ອງຕະຫຼາດ ແລະ ຫ້າງຮ້ານ ທັງແຂ່ງຂັນຮັບປະກັນມາດຖານ, ຄຸນນະພາບ ແລະ ທັງຕຳນິຕິຕຽນຄູ່ຮ່ວມທີ່ລະເມີດມາດຖານ ແລະ ຄຸນະພາບ ແບບປົກກະຕິຕໍ່ເນື່ອງ, ປະຕິບັດລະບອບກວດກາຄຸນນະພາບ, ມາດຖານ, ຄວາມປອດໄພ ແລະ ສຸຂະອະນາໄມ ຂອງສິນຄ້າກະສິກຳ;
4. ຜູ້ຜະລິດ, ປຸງແຕ່ງ ແລະ ຈຳໜ່າຍຮັບຜິດຊອບຕໍ່ກົດໝາຍ ຕໍ່ຄວາມບໍ່ປອດໄພ ຕໍ່ຜູ້ບໍລິໂພກຜະລິດຕະພັນຂອງຕົນເອງ, ຕ້ອງຮັບປະກັນຜົນປະໂຫຍດສູງສຸດ ຂອງຜູ້ຜະລິດ, ຜູ້ລົງທຶນ ແລະ ຜູ້ບໍລິໂພກ;

5. ຄຸນນະພາບຜັກ, ຄວາມປອດໄພຂອງຜູ້ບໍລິໂພກ ຢັ້ງຢືນໂດຍກົງຈາກເຈົ້າໜ້າທີ່ມາດຖານກະສິກໍາ, ສັດຕະວະແພດ, ສາທາລະນະສຸກ, ທາງອ້ອມຈາກສື່ມວນຊົນ ແລະ ລູກຄ້າຜູ້ຊົມໃຊ້.

ມາດຕາ 06 ຂອບເຂດການນໍາໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ຕໍ່ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການປູກ, ການປຸງແຕ່ງ, ການເກັບຮັກສາ, ການຈໍາໜ່າຍຜັກ ແລະ ຜະລິດຕະພັນຜັກ (ຜູ້ປະກອບການທຸລະກິດ) ທີ່ນະຄອນຫຼວງວຽງຈັນ.

## ໝວດທີ 2.

## ມາດຕະຖານຄຸນນະພາບຜັກ ແລະ ການສົ່ງເສີມການຜະລິດຜັກສະອາດ

ມາດຕາ 07 ການກໍານົດມາດຕະຖານຄຸນນະພາບຜັກ ແລະ ຜະລິດຕະພັນຜັກ

7.1. ຕົວຊີ້ວັດມາດຕະຖານຄຸນນະພາບຜັກ

7.1.1 ພື້ນທີ່ສວນປູກຜັກ ເປັນສິນຄ້າຕ້ອງຂຶ້ນທະບຽນ ແລະ ຈົດລິຂະສິດ ໃຫ້ຖືກຕ້ອງຕາມລະບຽບການ ແລະ ຖືກຢັ້ງຢືນຈາກທາງການ, ຈາກອົງການມາດຖານ ຫຼື ຂະແໜງກະສິກໍາ ແລະ ປ່າໄມ້ ປະເພດຕ່າງໆ, ໂດຍສະເພາະປະເພດຜະລິດວັດຖຸດິບອາຫານສະອາດ, ຊີວະພາບ;

7.1.2 ຂະບວນການຜະລິດຕ້ອງປະຕິບັດຖືກຕ້ອງ, ສອດຄ່ອງ ຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ສະບັບເລກທີ 0115/ກປ, ລົງວັນທີ 27/01/2011 ກໍານົດໄວ້, ມາດຕະຖານກະ ສິກໍາທີ່ດີ ແລະ ຄວາມປອດໄພຂອງຜົນຜະລິດ ຕ້ອງເລີ່ມຈາກຂອດການນໍາໃຊ້ແນວພັນ, ການນໍາໃຊ້ຝຸ່ນ, ນໍ້າ, ສານເຄມີ ແລະ ເຄື່ອງມືອຸປະກອນ ແລະ ເງື່ອນໄຂທີ່ຈໍາເປັນ ອື່ນໆ ເພື່ອຮັບປະກັນຄວາມປອດໄພທາງໂພສະນາການ ແລະ ປອດສານເຄມີ;

7.1.3 ລະບົບການຜະລິດໃນສວນປູກສາມາດກວດສອບຄືນໄດ້ ໂດຍສະເພາະການບັນທຶກຂໍ້ມູນ, ການນໍາໃຊ້ປັດໄຈການຜະລິດຕ່າງໆ ເຂົ້າໃນການປູກຜັກ;

7.1.4 ຜັກທີ່ຈະນໍາເຂົ້າມາຈໍາໜ່າຍຢູ່ຫ້ອງຕະຫຼາດ ຈະຕ້ອງໄດ້ຜ່ານການກວດກາ, ຢັ້ງຢືນຄຸນນະພາບຜັກຈາກອົງການມາດຖານ ແລະ ສູນກວດກາຄຸນນະພາບຜັກຂອງລັດ, ຫ້ອງວິໄຈປະຈໍາຕະຫຼາດ, ປະຈໍາເມືອງ ຫຼື ອົງກອນທີ່ມີສິດອໍານາດກວດກາຜັກຂອງລັດ ຫຼື ເອກະຊົນ ປະຈໍາຈຸດໃກ້ຄຽງ;

7.1.5 ຜັກທີ່ນໍາເຂົ້າຈາກຕ່າງແຂວງ ແລະ ຕ່າງປະເທດ ທີ່ຈະນໍາມາຈໍາໜ່າຍ ຢູ່ໃນນະຄອນຫຼວງວຽງຈັນ ຖືກກວດກາ ແລະ ຢັ້ງຢືນ ຕິດສະຕິກເກີຈາກອົງການມາດຖານ (ໜ່ວຍກວດກາ) ປະຈໍາສູນ ຫຼື ດ່ານສາກົນ ແລະ ທ້ອງຖິ່ນ, ພ້ອມທັງໄດ້ຜ່ານການກວດກາສານເຄມີຕົກຄ້າງ, ກວດກາແມງໄມ້ສັດຕູຜັກ, ອາຍຸການນໍາໃຊ້ ແລະ ໄດ້ຮັບອະນຸຍາດຈາກໜ່ວຍງານກ່ຽວຂ້ອງຈຶ່ງສາມາດນໍາເຂົ້າມາຈໍາໜ່າຍໄດ້. (ແຕ່ການກວດກາ-ຢັ້ງຢືນຕ້ອງເປັນໄປຕາມລະບຽບການທີ່ລັດຖະບານກໍານົດ)

7.2. ການກໍານົດມາດຕະຖານຄຸນນະພາບຜະລິດຕະພັນຜັກ

7.2.1 ຜະລິດຕະພັນພືດ ທີ່ຈະຈຳໜ່າຍໃນທ້ອງຕະຫຼາດ ຕ້ອງໄດ້ຕິດສະຕິກເກີ້ ຢັ້ງຢືນຄຸນນະພາບ ຂອງ ອາຫານ ແລະ ຢາ (ອຢ) ຈາກກະຊວງສາທາລະນະສຸກ ເພື່ອຢັ້ງຢືນຄຸນນະພາບ ຫຼື ສະຕິກເກີ້ ຢັ້ງຢືນ ການກວດກາ ຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ;

7.2.2 ສະຖານທີ່ຈຳໜ່າຍ, ຫຸ້ມຫໍ່, ລວມເຖິງພາຊະນະບັນຈຸ ຜະລິດຕະພັນພືດ ຈະຕ້ອງປ້ອງກັນການ ກະທົບແຊກຊຶມເຊື້ອພະຍາດ ແລະ ຮັບປະກັນ ມາດຖານຄວາມສະອາດ ແລະ ຄວາມປອດໄພໃຫ້ການ ບໍລິໂພກ;

7.2.3 ຂະບວນການນຳໃຊ້ວັດຖຸດິບການຜະລິດ, ອຸປະກອນ, ເຕັກນິກການປຸງແຕ່ງ ຈະຕ້ອງເລີ່ມແຕ່ ຫົວທີຮັບປະກັນໃຫ້ມີຄວາມປອດໄພຕໍ່ການບໍລິໂພກ;

7.2.4 ຜະລິດຕະພັນພືດ ທີ່ນຳເຂົ້າຈາກຕ່າງປະເທດ ເພື່ອນຳມາຈຳໜ່າຍ ພາຍໃນນະຄອນຫຼວງວຽງຈັນ ຕ້ອງຜ່ານດ່ານພາສີ ແລະ ໄດ້ຮັບອະນຸຍາດຈາກອົງການມາດຖານ (ໜ່ວຍກັກກັນພືດ) ປະຈຳດ່ານ ສາກົນ ຫຼື ດ່ານທ້ອງຖິ່ນ ຈຶ່ງສາມາດນຳເຂົ້າມາຈຳໜ່າຍໄດ້.

**ມາດຕາ 08 ການສົ່ງເສີມຜູ້ຜະລິດພືດສະອາດ**

1. ລັດສົ່ງເສີມບຸກຄົນ, ນິຕິບຸກຄົນທີ່ຜະລິດພືດເປັນສິນຄ້າ ຈະເປັນແບບຄອບຄົວ, ລວມໝູ່ ຫຼື ແບບ ເປັນຟາມ ກໍຕ້ອງຄຳນຶງເຖິງ ຄຸນນະພາບ ແລະ ຄວາມສະອາດ, ບັນລຸມາດຕະຖານກະສິກຳທີ່ດີ, ກະສິກຳອິນຊີ;
2. ສົ່ງເສີມໃຫ້ຜູ້ຜະລິດພືດເປັນສິນຄ້າ ໃຫ້ຫຼຸດຜ່ອນ ຫຼື ກ້າວໄປເຖິງບໍ່ນຳໃຊ້ຢາປາບສັດຕູພືດ ແລະ ສານເຄມີ ແລະ ຫັນມາໃຊ້ຝຸ່ນຊີວະພາບ;
3. ສົ່ງເສີມໃຫ້ຜູ້ຜະລິດພືດ ຫັນມານຳໃຊ້ປັດໄຈການຜະລິດຈາກທຳມະຊາດ ທົດແທນສານເຄມີສັງ ເຄາະ ເຊັ່ນ: ຝຸ່ນຄອກ, ເຟືອງ, ສະໝຸນໄພ ເພື່ອປ້ອງກັນແມງໄມ້ສັດຕູພືດ.
4. ສົ່ງເສີມໃຫ້ຜູ້ຜະລິດພືດ ແລະ ປຸງແຕ່ງພືດ ນຳໃຊ້ຢາປາບສັດພືດທີ່ ສປປ ລາວ ອະນຸຍາດໃຫ້ນຳ ໃຊ້ໃຫ້ຖືກຕ້ອງຕາມຫຼັກວິຊາການ ແລະ ສອດຄ່ອງຕາມມາດຕະຖານກະສິກຳທີ່ດີ, ຊຶ່ງກະຊວງກະສິກຳ ແລະ ປ່າໄມ້ ກຳນົດໄວ້; (ເບິ່ງມາດຕາທີ 9, ເລກທີ 0115/ກປ), ລົງວັນທີ 27ມັງກອນ 2011;
5. ການນຳເຂົ້າພືດ ແລະ ຜະລິດຕະພັນພືດ ຈາກຕ່າງແຂວງ ແລະ ຕ່າງປະເທດເພື່ອມາຈຳໜ່າຍ ຢູ່ ນະຄອນຫຼວງວຽງຈັນ ຕ້ອງມີໃບຮັບຮອງ ແລະ ຢັ້ງຢືນຄຸນນະພາບພືດ ຈາກປະເທດຕົ້ນທາງ ແລະ ຜ່ານການກວດສອບ, ຢັ້ງຢືນຈາກອົງການມາດຖານ(ໜ່ວຍປ້ອງກັນພືດ) ປະຈຳດ່ານສາກົນ.

**ມາດຕາ 09 ການປົກປ້ອງຜູ້ຜະລິດພືດສະອາດ**

ລັດມີນະໂຍບາຍປົກປ້ອງຕໍ່ຜູ້ຜະລິດພືດ, ຫຸ້ມຫໍ່ພືດ, ຜູ້ຈຳໜ່າຍພືດ ແລະ ພືດທີ່ສະອາດ ໂດຍພາກ ລັດຈະສະໜັບສະໜູນ: ການຝຶກອົບຮົມທາງດ້ານວິຊາການ, ນະໂຍບາຍສິນເຊື່ອຈາກທະນາຄານ, ກອງ ທຶນ, ການຕະຫຼາດພາຍໃນ ແລະ ສາກົນ, ການຕໍ່ລອງ, ການແຂ່ງຂັນດ້ານລາຄາ, ການໄດ້ຮັບ ນະໂຍບາຍໃນກໍລະນີເກີດໄພພິບັດທາງທຳມະຊາດ ແລະ ໄດ້ຮັບການບໍລິທາງດ້ານສາທາລະນະສຸກ.

**ມາດຕາ 10 ການປົກປ້ອງຜູ້ບໍລິໂພກ**

1. ສົ່ງເສີມຜູ້ບໍລິໂພກມີສິດເລືອກໃຊ້ສິນຄ້າຜັກ ແລະ ຜະລິດຕະພັນຜັກ ທີ່ຈໍາໜ່າຍ ຢູ່ໃນຕະຫຼາດທີ່ມີສະຕິກເກີ້ຮັບຮອງມາດຖານຄຸນນະພາບ ແລະ ຄວາມປອດໄພ;

2. ຜູ້ບໍລິໂພກສາມາດເຂົ້າເຖິງສິນຄ້າທີ່ລະບຸສະຖານທີ່ຈໍາໜ່າຍຜັກ ແລະ ຜະລິດຕະພັນຜັກ ທີ່ມີຄວາມສະດວກ ແລະ ສະອາດກວ່າ.

3. ຜູ້ບໍລິໂພກຕ້ອງສາມາດ ຮູ້ເຫັນແຫຼ່ງວັດຖຸດິບທີ່ນໍາມາປຸງແຕ່ງ, ສະຖານທີ່ຜະລິດ, ຈໍາໜ່າຍທີ່ສະອາດ, ລາຄາເໝາະສົມກັບສະຖານະພາບສະຖານທີ່, ແຫຼ່ງວັດຖຸດິບ ແລະ ສາມາດກວດສອບແຫຼ່ງທີ່ມາຄືນໄດ້;

4. ຜູ້ບໍລິໂພກລາຍໃຫຍ່ສາມາດສັ່ງຈອງຜະລິດຕະພັນຜັກຕາມມາດຖານທີ່ທາງການປະກາດໂດຍກົງນໍາຜູ້ຜະລິດ ແລະ ວາງເງິນມັດຈໍາ ເພື່ອຄວບຄຸມຄຸນນະພາບ.

5. ໃນກໍລະນີການບໍລິໂພກບໍ່ຮັບປະກັນຄວາມປອດໄພ, ບໍ່ຮັບປະກັນມາດຖານຄຸນນະພາບ ຫຼື ປອມແປງຜູ້ບໍລິໂພກມີສິດຮ້ອງຟ້ອງຕໍ່ເຈົ້າຂອງສິນຄ້າຕາມກົດໝາຍ.

## ມາດຕາ 11 ການສົ່ງເສີມການຈໍາໜ່າຍ

1. ຜູ້ປະກອບການຕ້ອງຈໍາໜ່າຍຜັກ ແລະ ຜະລິດຕະພັນຜັກ ທີ່ມີມາດຕະຖານຮອງຮັບ, ມີຄວາມສະອາດຖືກຫຼັກອະນາໄມ ແລະ ໄດ້ຮັບອະນຸຍາດຈາກອົງການລັດ ຢ່າງຖືກຕ້ອງ;

2. ຜູ້ຈໍາໜ່າຍຜັກ, ຜະລິດຕະພັນຜັກ ໃຫ້ຈໍາໜ່າຍ ຢູ່ໃນສະຖານທີ່ ທີ່ທາງການອະນຸຍາດໃຫ້ເພື່ອຫຼຸດຜ່ອນການສູນເສຍຄຸນນະພາບ, ຂາດຫຼັກອານາໄມ ແລະ ຜິດລະບຽບການບໍລິການ;

3. ຜູ້ຈໍາໜ່າຍຜັກ ແລະ ຜະລິດຕະພັນຜັກ ຕ້ອງຈັດວາງ ແລະ ສ້າງລະບົບປະເພດຜະລິດຕະພັນຜັກເພື່ອສະດວກໃນການຄວບຄຸມມາດຖານ;

4. ສົ່ງເສີມໃຫ້ພາກສ່ວນເອກະຊົນ, ນັກທຸລະກິດ ແລະ ນິຕິບຸກຄົນເປີດຮ້ານຈໍາໜ່າຍຜັກ ແລະ ຜະລິດຕະພັນຜັກທີ່ມີລະບົບການນໍາໃຊ້ເຄື່ອງເຢັນທີ່ມີຄວາມທັນສະໄໝ ພ້ອມທັງຕິດສະຕິກເກີ້ຢັ້ງຢືນຄຸນນະພາບ ຈາກອົງການທີ່ກ່ຽວຂ້ອງ;

5. ສົ່ງເສີມທຸກພາກສ່ວນເສດຖະກິດ, ບຸກຄົນ ແລະ ນິຕິບຸກຄົນ ລົງທຶນສ້າງຕະຫຼາດຂາຍຍົກ, ຂາຍຍ່ອຍ ທີ່ມີຈຸດລວບລວມຜົນຜະລິດໃນລະບົບສາງເຢັນທີ່ບັນລຸມາດຕະຖານກໍານົດໄວ້.

## ມາດຕາ 12 ການສົ່ງເສີມການຈໍາໜ່າຍຜັກ ແລະ ຜະລິດຕະພັນຜັກເພື່ອສົ່ງອອກສູ່ຕະຫຼາດສາກົນ

ອົງການປົກຄອງນະຄອນຫຼວງວຽງຈັນ ມີນະໂຍບາຍສົ່ງເສີມນັກທຸລະກິດ, ຜູ້ປະກອບການ ແລະ ຊາວກະສິກອນ ແຂ່ງຂັນການຜະລິດຜັກ ແລະ ຜະລິດຕະພັນທີ່ມີຍີ່ຫໍ້, ຄົບມາດຖານສາກົນ ຕາມນະໂຍບາຍຂອງລັດຖະບານ ເພື່ອສົ່ງອອກສູ່ຕະຫຼາດ ເປັນຕົ້ນ: ເຂົ້າອິນຊີ, ຜັກຜັກ ແລະ ໝາກໄມ້ສະອາດ, ມີມາດຕະຖານ ແລະ ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດຕ່າງປະເທດນັ້ນໆ.

## ມາດຕາ 13 ການກວດກາຢັ້ງຢືນຄຸນນະພາບຜັກ ແລະ ຜະລິດຕະພັນຜັກ

1. ພືດຜັກ ແລະ ໝາກໄມ້ ທີ່ຈໍາໜ່າຍໃນທ້ອງຕະຫຼາດ ທົ່ວນະຄອນຫຼວງວຽງຈັນ ຕ້ອງໄດ້ຜ່ານການກວດກາ, ການຢັ້ງຢືນ, ຮັບຮອງຄຸນນະພາບຕາມມາດຕະຖານກະສິກໍາທີ່ດີ ທີ່ສ້າງຂຶ້ນພາຍໃຕ້ມາດຕະຖານກະສິກໍາທີ່ດີຂອງອາຊຽນ (ASEAN GAP) ແລະ ມາດຕະຖານກະສິກໍາອິນຊີ ຂອງກະຊວງກະສິກໍາ ແລະ ປ່າໄມ້ ຊຶ່ງສ້າງຂຶ້ນພາຍໃຕ້ຖານມາດຕະຖານກະສິກໍາອິນຊີ ຂອງສະຫະພັນກະສິກໍາອິນຊີຂອງສາກົນ (International Federation of Organic Agriculture Movement -IFOAM);

2. ພືດຜັກ ແລະ ໝາກໄມ້ ຕ້ອງໄດ້ຜ່ານການວິໄຈສານເຄມີຕົກຄ້າງ ຈາກຫ້ອງປະຕິບັດການດ້ວຍເຄື່ອງມືທີ່ທັນສະໄໝ ຫຼື ເຄື່ອງ (GT-Pesticide Residual test kit) ລະດັບສານພິດຕົກຄ້າງຕ້ອງເທົ່າ ຫຼື ຕ່ຳກວ່າຄ່າກຳນົດຂອງ ສປປ ລາວ ແລະ (MRL-Maximum Residue Limits) ຕາມກົດລະຫັດຂອງສາກົນ (Codex Alimentarius) ຊຶ່ງອີງການອາຫານ ແລະ ການກະເສດ ຂອງສະຫະປະຊາຊາດ ໄດ້ກຳນົດໄວ້;

3. ພືດຜັກ ແລະ ຜະລິດຕະພັນ ທີ່ຈຳໜ່າຍໃນຫ້ອງຕະຫຼາດ ຕ້ອງໄດ້ຕິດເຄື່ອງໝາຍໂລໂກ້ ກະສິກຳທີ່ດີ, ກະສິກຳອິນຊີ, ສ່ວນຜະລິດຕະພັນພືດທີ່ປຸງແຕ່ງ ທີ່ຈຳໜ່າຍໃນຫ້ອງຕະຫຼາດ ຕ້ອງເປັນສິນຄ້າໂອດ່ອບ ຫຼື ມີສະຫຼາກ ອຢ ຂອງກະຊວງສາທາລະນະສຸກ ຮັບຮອງ;

4. ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພະແນກການກ່ຽວຂ້ອງອ້ອມຂ້າງເປັນຕົ້ນ: ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກສາທາລະນະສຸກ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ;

5. ຄຸນນະພາບພືດຕ້ອງໄດ້ຮັບການກວດກາຈາກສູນກວດກາພືດ, ພະແນກກະສິກຳ - ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ສູນປະຈຳເມືອງທີ່ໄດ້ກຳນົດໄວ້.

**ມາດຕາ 14 ສູນຄຸນນະພາບພືດ ຢູ່ນະຄອນຫຼວງວຽງຈັນ**

ສູນຄຸນນະພາບພືດເຮັດໜ້າທີ່ວິໄຈສານພິດຕົກຄ້າງ ແລະ ຢັ້ງຢືນຄຸນນະພາບພືດ ແລະ ຜະລິດຕະພັນພືດ ເຊິ່ງຢູ່ນະຄອນຫຼວງວຽງຈັນ ປະຈຸບັນມີ 4 ຈຸດ ຄື:

1. ຫ້ອງວິໄຈສານພິດຕົກຄ້າງພືດຜັກ ແລະ ໝາກໄມ້ ຢູ່ສູນປ້ອງກັນພືດສາລະຄຳ ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້;

2. ຫ້ອງວິໄຈສານພິດຕົກຄ້າງພືດຜັກ ແລະ ໝາກໄມ້ ຢູ່ສະຖານີກະສິກຳສະອາດໂນນຫວາຍຂະແໜງປູກຝັງ ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ;

3. ຫ້ອງວິໄຈສານພິດຕົກຄ້າງປະຈຳຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ແລະ ຕະຫຼາດອ້ອມຂ້າງຂອງ 9 ເມືອງ ຂອງນະຄອນຫຼວງວຽງຈັນ;

4. ນອກຈາກວິໄຈສານພິດຕົກຄ້າງໃນສູນກວດກາພືດແລ້ວ ຍັງສາມາດກວດກາວິໄຈສານພິດຕົກຄ້າງຈາກພືດ ແລະ ໝາກໄມ້ ຢູ່ພາກສະໜາມຈາກອີງການມາດຕະຖານເຄື່ອນທີ່ສະເພາະ ເຊັ່ນ: ສະຖານທີ່ຜະລິດພືດ ແລະ ສະຖານທີ່ປຸງແຕ່ງ ແລະ ຫຸ້ມຫໍ່.

**ມາດຕາ 15 ສິດ ແລະ ໜ້າທີ່ຂອງສູນຄຸນນະພາບພືດ ແລະ ຜະລິດຕະພັນພືດ**

1. ລົງສຸ່ມຕົວຢ່າງພືດຢູ່ສະຖານທີ່ຜະລິດ ແລະ ບ່ອນຈຳໜ່າຍ ເປັນປົກກະຕິເພື່ອກວດກາຄຸນນະພາບພືດໃຫ້ສິນຄ້າໄດ້ຕາມມາດຕະຖານ;

2. ດຳເນີນການກວດກາຄຸນນະພາບ ແລະ ວິໄຈສານພິດຕົກຄ້າງໃນພືດທີ່ພວມຜະລິດຢູ່ ແລະ ກ່ອນການນຳອອກຈຳໜ່າຍ ທຸກໆຄັ້ງ.

3. ແຈ້ງຜົນການກວດກາຄຸນນະພາບພືດ, ຜົນການວິໄຈສານພິດຕົກຄ້າງໃນພືດ ແລະ ຂໍ້ແນະນຳທາງດ້ານວິຊາການຢ່າງຊັດເຈັນ ແລະ ຖືກຕ້ອງຕາມຫຼັກວິຊາການ ໃຫ້ເຈົ້າຂອງສິນຄ້າ ຜະລິດຕະພັນພືດ.

4. ອຳນວຍຄວາມສະດວກໃຫ້ຊາວກະສິກອນ, ຜູ້ປະກອບການດ້ານພືດ ແລະ ຜະລິດຕະພັນພືດ ທີ່ຜ່ານການກວດກາເຫັນວ່າມີຄວາມປອດໄພນຳຜົນຜະລິດເຂົ້າຈຳໜ່າຍໃນທ້ອງຕະຫຼາດ;

5. ສະກັດກັ້ນພືດ ແລະ ຜະລິດຕະພັນພືດ ທີ່ເຫັນວ່າມີຄວາມສ່ຽງຕໍ່ສານປົນເປື້ອນຍ້ອນມີການຕົກຄ້າງຂອງຢາປາບສັດຕູພືດ ແລະ ຈຸລິນຊີ ບໍ່ໃຫ້ນຳອອກຈຳໜ່າຍ ຢູ່ຕະຫຼາດນະຄອນຫຼວງວຽງຈັນ;

6. ພັດທະນາເຄື່ອງມື ແລະ ອຸປະກອນທີ່ທັນສະໄໝ ເພື່ອບໍລິການໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ຊາວກະສິກອນທີ່ຕ້ອງການ ການກວດພືດ ແລະ ຄຸນນະພາບພືດ.

### ມາດຕາ 16 ສິດ ແລະ ພັນທະຂອງຜູ້ປະກອບການ ດ້ານພືດ ແລະ ຜະລິດຕະພັນພືດ

1. ຜູ້ປະກອບການດ້ານການຜະລິດ, ຈຳໜ່າຍພືດ ແລະ ຜະລິດຕະພັນພືດ ຕ້ອງຮັບປະກັນຄວາມປອດໄພ, ຄວາມສະອາດຂອງພືດ ໃຫ້ຖືກຕ້ອງຕາມຫຼັກສຸຂະອະນາໄມພືດ ແລະ ຫຼັກໂພຊະນາການ;

2. ພືດ ແລະ ຜະລິດຕະພັນພືດ ທີ່ນຳມາຈຳໜ່າຍໃນທ້ອງຕະຫຼາດ ຕ້ອງມີຂໍ້ມູນແຫຼ່ງທີ່ມາ, ມີການບັນທຶກຂໍ້ມູນຂອງສິນຄ້າ ແລະ ສາມາດກວດສອບຜົນຍ້ອນກັບແຫຼ່ງທີ່ມາຂອງຜູ້ຜະລິດ ແລະ ສິນຄ້າໄດ້ ໃນກໍລະນີເກີດມີການບໍລິໂພກແລ້ວເກີດອາການເຈັບປ່ວຍ ຫຼື ເສຍຊີວິດ;

3. ຜູ້ປະກອບການຕ້ອງມີພັນທະຕໍ່ສັງຄົມ ແລະ ຜູ້ບໍລິໂພກຕ້ອງນຳເອົາສິນຄ້າຂອງຕົນໄປວິໄຈສານພິດຕົກຄ້າງກ່ອນນຳເຂົ້າຈຳໜ່າຍໃນທ້ອງຕະຫຼາດ;

4. ໃນກໍລະນີຜູ້ບໍລິໂພກຫາກເກີດອາການເຈັບປ່ວຍ, ເປັນພິດ, ຫຼືເສຍຊີວິດຫຼັງຈາກການ ບໍລິໂພກພືດ ແລະ ຜະລິດຕະພັນພືດ, ຜູ້ຜະລິດ ແລະ ຜູ້ຈຳໜ່າຍຄືຕ້ອງມີຄວາມຮັບຜິດຊອບໂດຍກົງຕໍ່ຜົນເສຍຫາຍຕາມກົດໝາຍ ຂອງ ສປປ ລາວ ວາງອອກ;

5. ອຳນວຍຄວາມສະດວກໃຫ້ໜ່ວຍງານ, ຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ເຂົ້າເກັບກຳຂໍ້ມູນກວດກາສຸ່ມຕົວຢ່າງພືດ ແລະ ຜະລິດຕະພັນພືດ ຢູ່ສະຖານທີ່ຜະລິດ ແລະ ຈຳໜ່າຍ.

### ມາດຕາ 17 ສິດ ແລະ ໜ້າທີ່ຂອງອົງກອນມາດຖານກະສິກຳວຽງຈັນ *(ອ.ມ.ກ.ວ ຫຼື QIA)*

Quality Inspection Agency of Vientiane Capital

17.1 ອົງກອນມາດຖານແມ່ນໜ່ວຍວິຊາການ ຂອງອົງການສົ່ງເສີມຄຸນນະພາບພືດ ແລະ ຜະລິດຕະພັນພືດ ຕາມບົດບາດ, ໜ້າທີ່ດ້ານມາດຖານສະເພາະປະເພດພືດ ແລະ ຜະລິດຕະພັນພືດບົນພື້ນຖານວິທະຍາສາດ ແລະ ກົດບັດມາດຖານແຫ່ງຊາດ ແລະ ສາກົນ

17.2 ສິດ ແລະ ໜ້າທີ່ຂອງອົງກອນມາດຖານຄື:

17.2.1 ຄົ້ນຄວ້າວິໄຈ ມາດຕະຖານໃຫ້ທັນສະໄໝ, ແນະນຳມາດຖານແຫ່ງຊາດ ແລະ ສາກົນໃຫ້ຜູ້ປະກອບການ ແລະ ສະເໜີທາງການປັບປຸງຍົກລະດັບມາດຖານຜະລິດຕະພັນພືດ ໃຫ້ກ້າວສູ່ຕາມມາດຕະຖານສາກົນ;

17.2.2. ກວດກາການປະຕິບັດໜ້າທີ່ຂອງໜ່ວຍກວດກາ ແລະ ຜູ້ປະກອບການ;

17.2.3. ຝຶກອົບຮົມຜູ້ປະກອບການໃຫ້ຮັບຮູ້ກົດໝາຍ ແລະ ລັກສະນະຂອງແຕ່ລະປະເພດສິນຄ້າກະເສດ, ໂດຍສະເພາະສິນຄ້າຜະລິດຕະພັນພືດ.

## ໝວດທີ 3

## ອົງການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບພືດ

**ມາດຕາ 18 ອົງການສົ່ງເສີມ ແລະ ຄຸ້ມຄອງມາດຖານຜະລິດຕະພັນພືດ**

ອົງການສົ່ງເສີມ ແລະ ຄຸ້ມຄອງມາດຖານຜະລິດຕະພັນພືດ ປະກອບມີພາກສ່ວນ ດັ່ງນີ້:

18.1. ອົງການທາງກົງປະກອບມີ:

- ພະແນກກະສິກຳ-ປ່າໄມ້ ນະຄອນຫຼວງວຽງຈັນ;
- ຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ;
- ຜູ້ປະກອບການ, ນັກທຸລະກິດດ້ານການຕະຫຼາດ;

18.2. ອົງການທາງອ້ອມປະກອບມີ:

- ພະແນກອຸດສາຫະກຳ ແລະ ການຄ້າ;
- ພະແນກສາທາລະນະສຸກ;
- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງອົງການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບພືດທາງກົງ**

**ກ. ສິດໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ ປະຈຳນະຄອນຫຼວງວຽງຈັນ:**

1. ເປັນຜູ້ຕາງໜ້າອົງການປົກຄອງອຳນວຍຄວບຄຸມໂດຍກົງໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃນທົ່ວນະຄອນ;
2. ອອກໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ແລະ ຢັ້ງຢືນຜົນການວິໄຈສານພິດຕົກຄ້າງ, ຂຶ້ນທະບຽນສວນປູກໃຫ້ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຄວາມຕ້ອງການດຳເນີນກິດຈະການພືດ ແລະ ຜະລິດຕະພັນພືດ;
3. ດຳເນີນການກວດກາວິໄຈຫາສານພິດຕົກຄ້າງໃນພືດຢູ່ສະຖານທີ່ຜະລິດ, ຫຸ້ມຫໍ່, ຕະຫຼາດ, ຮ້ານຄ້າຕ່າງໆ ທີ່ຈຳໜ່າຍພືດ ແລະ ຜະລິດຕະພັນພືດ;
4. ສ້າງຄວາມເຂັ້ມແຂງໃຫ້ພະນັກງານວິຊາການຂັ້ນນະຄອນ ແລະ ຂັ້ນເມືອງ ໃນການກວດກາຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ໃຫ້ມີປະສິດທິພາບ ແລະ ໄດ້ຕາມມາດຕະຖານ;
5. ປະສານສົມທົບກັບທຸກພາກສ່ວນລັດ ແລະ ເອກະຊົນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ຢູ່ຕະຫຼາດນະຄອນຫຼວງວຽງຈັນ;

6. ລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ກວດກາມາດຖານພືດ ແລະ ຜະລິດຕະພັນພືດ ໃຫ້ອົງການປົກຄອງ ນະຄອນຫຼວງວຽງຈັນ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອຮັບຊາບຢ່າງເປັນປົກກະຕິ.

**ຂ. ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ປະຈຳເມືອງ:**

1. ເປັນຜູ້ອຳນວຍຄວບຄຸມໂດຍກົງໃນການຈັດຕັ້ງປະຕິບັດນິຕິກຳການຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ;
2. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດຢູ່ສະຖານທີ່ຜະລິດ, ຫຸ້ມຫໍ່ ແລະ ສະຖານທີ່ຈຳໜ່າຍ;
3. ຕິດຕາມ, ກວດກາ ແລະ ປະຈຳຢູ່ຕະຫຼາດ;
4. ສຸ່ມກວດກາວິໄຈສານພິດຕົກຄ້າງໃນພືດ ແລະ ຜະລິດຕະພັນພືດ;
5. ລົງກວດກາ, ຕິດຕາມສະຖານທີ່ດຳເນີນການປູກ, ການເກັບກ່ຽວ, ການຫຸ້ມຫໍ່ ແລະ ການປຸງແຕ່ງພືດ;
6. ລາຍງານ ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແລະ ຫ້ອງການປົກຄອງເມືອງ ຮັບຊາບຢ່າງເປັນປົກກະຕິ.

**ຄ. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ:**

1. ເປັນເຈົ້າການ, ອຳນວຍຄວາມສະດວກ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກັບມາດຕະຖານ;
2. ເຂົ້າຮ່ວມການ ກວດກາພືດ ແລະ ຜະລິດຕະພັນພືດນຳໜ່ວຍງານຄຸ້ມຄອງ ແລະ ກວດກາພືດ ແລະ ຜະລິດຕະພັນພືດ;
3. ຮັບການສະເໜີ, ການຮ້ອງຟ້ອງຂໍຄວາມເປັນທຳຈາກທຸກພາກສ່ວນທີ່ກ່ຽວພັນກັບຄຸນນະພາບພືດ ແລະ ຜະລິດຕະພັນພືດໃນບ້ານຂອງຕົນ;
4. ເຂົ້າຮ່ວມການແກ້ໄຂທຸກບັນຫາ ທີ່ເກີດຂຶ້ນກ່ຽວກັບພືດ ແລະ ຜະລິດຕະພັນພືດ ຕາມຄວາມຮັບຜິດຊອບຂອງຕົນ.

**ງ. ສິດ ແລະ ໜ້າທີ່ ຜູ້ປະກອບການຕະຫຼາດ ແລະ ຮ້ານຈຳໜ່າຍຜະລິດຕະພັນພືດ:**

1. ອຳນວຍຄວາມສະດວກໃຫ້ພາກລັດທີ່ກ່ຽວຂ້ອງລົງເຮັດວຽກກວດກາ ແລະ ເກັບຕົວຢ່າງເພື່ອວິໄຈຫາສານພິດຕົກຄ້າງຮ່ວມກັນ;
2. ດຳເນີນການຈັດສັນ ແລະ ກວດກາຕະຫຼາດໃຫ້ສອດຄ່ອງຕາມນະໂຍບາຍກະສິກຳສະອາດ;
3. ກວດກາສິນຄ້າເຂົ້າຕະຫຼາດໃຫ້ໄປຕາມມາດຕະຖານ;
4. ຈ່າຍຄ່າວິໄຈພືດ ແລະ ຜະລິດຕະພັນພືດທີ່ມອບໃນການຄຸ້ມຄອງຂອງຕົນ;

## ມາດຕາ 20 ສິດ ແລະ ໜ້າທີ່ຂອງອົງການສົ່ງເສີມຄຸນນະພາບພືດທາງອ້ອມ

- ພະແນກອຸດສາຫະກຳ ແລະ ການຄ້າ;
- ພະແນກສາທາລະນະສຸກ;

- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
- ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

ສິດ ແລະ ໜ້າທີ່ ຂອງພະແນກການ ແລະ ອົງການທີ່ມີສ່ວນຮ່ວມພົວພັນໃນການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບຜືດ ແລະ ຜະລິດຕະພັນຜືດ ແມ່ນປະຕິບັດຕາມສິດ, ໜ້າທີ່ ແລະ ພາລະບົດບາດ ຂອງຂະແໜງການຕົນ

## ໝວດທີ 4

## ການກວດກາຄຸນນະພາບຜືດ ແລະ ຜະລິດຕະພັນຜືດ

**ມາດຕາ 21 ຮູບແບບການກວດກາຄຸນນະພາບ ແລະ ມາດຖານ:**

ການກວດກາຄຸນນະພາບ ແລະ ມາດຖານຜືດ ແລະ ຜະລິດຕະພັນຜືດ ມີ 3 ຮູບການ ດັ່ງນີ້:

– ຮູບການກວດກາຕາມລະບົບປົກກະຕິ: ແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງປະຕິບັດຢ່າງໜ້ອຍ 2 ຫາ 3 ຄັ້ງຕໍ່ປີ;

– ຮູບການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນຊຶ່ງຕ້ອງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ;

ຮູບການກວດກາແບບກະທັນຫັນ: ແມ່ນການກວດກາໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

**ມາດຕາ 22 ເປົ້າໝາຍການກວດກາຄຸນນະພາບ ແລະ ມາດຖານ:**

1. ກວດກາມາດຖານສະຖານທີ່;
2. ກວດກາຕົວຊີ້ວັດ ຕາມມາດຕາ 7 ແລະ ຂໍ້ກຳນົດອື່ນຕາມກົດໝາຍ ແລະຂໍ້ຕົກລົງສະບັບນີ້;
3. ກວດກາຜູ້ປະກອບການ ນຳໃຊ້ສານເຄມີເປັນຜືດ;
4. ກວດກາຊະນິດຜືດ ແລະ ຕົວຊີ້ວັດຄຸນນະພາບ;
5. ກວດກາຜູ້ບໍລິການ ແລະ ຄຳຮ້ອງຟ້ອງຂອງຜູ້ບໍລິໂພກ.

**ມາດຕາ 23 ປະເພດ ແລະ ຮູບການກວດກາຄຸນນະພາບ ແລະ ມາດຖານ**

23.1 ສຸ່ມກວດ;

23.2 ກວດປົກກະຕິ;

23.3 ກວດກາໂດຍການກຳນົດເປົ້າໝາຍ.

**ມາດຕາ 24 ການກວດກາມາດຕະຖານຜືດ**

24.1 ການສຸ່ມເກັບຕົວຢ່າງ:

ການສຸ່ມຕົວຢ່າງພືດ ແລະ ຜະລິດຕະພັນພືດ ວິໄຈຫາສານພິດຕົກຄ້າງ ແມ່ນປະຕິບັດຕາມຂັ້ນຕອນ ດັ່ງນີ້:

– ລົງສຸ່ມເກັບຕົວຢ່າງພືດຈາກແຫຼ່ງຜະລິດຫຸ້ມຫໍ່ ແລະ ຈຸດຈຳໜ່າຍ 1 ຄັ້ງຕໍ່ອາທິດ;
– ສົ່ງຕົວຢ່າງພືດ ແລະ ຜະລິດຕະພັນພືດໄປຫ້ອງວິໄຈ;
– ດຳເນີນການວິໄຈຕາມເຕັກນິກວິຊາການ;
– ສະຫຼຸບຜົນການວິໄຈ ແລະ ແຈ້ງຜົນການວິໄຈ ໃຫ້ກັບຜູ້ປະກອບການ ຮັບຊາບ.

24.2. ການປະຕິບັດຜົນຂອງການກວດກາ

ໃນກໍລະນີກວດພົບພືດ ແລະ ຜະລິດຕະພັນພືດ ທີ່ມີສານພິດຕົກຄ້າງໃນລະດັບທີ່ບໍ່ປອດໄພ ຕ້ອງໄດ້ເຮັດບົດບັນທຶກ, ສຶກສາອົບຮົມ, ປັບໃໝຕາມລະບຽບການ ພ້ອມທັງທຳລາຍຖິ້ມແລະ ຜູ້ກ່ຽວຕ້ອງຮັບຜິດຊອບໃນຄ່າໃຊ້ຈ່າຍການທຳລາຍຂອງຜົນຜະລິດດັ່ງກ່າວ .

## ໝວດທີ 5

## ລາຍຮັບ ແລະ ລາຍຈ່າຍ

**ມາດຕາ 25 ລາຍຮັບ ຂອງການສົ່ງເສີມ ແລະ ຄຸ້ມຄອງຄຸນນະພາບພືດ ແລະ ຜູ້ດຕະພັນພືດ**

- ລາຍຮັບຈາກການເກັບຄ່າທຳນຽມການວິໄຈສານພິດຕົກຄ້າງ ຂອງພະແນກກະສິກຳ - ປ່າໄມ້;
- ລາຍຮັບຈາກການບໍລິການດ້ານວິຊາການ;
- ລາຍຮັບຈາກສະມາຊິກອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດ;
- ລາຍຮັບຈາກການປະກອບສ່ວນຂອງຜູ້ປະກອບການດ້ານຕະຫຼາດ;
- ລາຍຮັບຈາກການເກັບຄ່າປັບໃໝ, ຄ່າທຳລາຍພືດ ແລະຜະລິດຕະພັນພືດທີ່ບໍ່ປອດໄພ;
- ລາຍຮັບຈາກງົບປະມານຂອງລັດໃນແຕ່ລະປີ.

**ມາດຕາ 26 ລາຍຈ່າຍ:**

- ຈ່າຍຄ່າຈັດຊື້ອຸປະກອນ ເຄື່ອງມືຮັບໃຊ້ການວິໄຈສານພິດຕົກຄ້າງໃນພືດ ແລະ ຜະລິດຕະພັນພືດ;
- ຈ່າຍຄ່າການຈັດຕັ້ງປະຕິບັດວຽກງານດ້ານວິຊາການຂອງນັກວິຊາການ;
- ຈ່າຍຄ່າທຳລາຍພືດ ແລະ ຜະລິດຕະພັນພືດທີ່ບໍ່ປອດໄພ;
- ສ້າງປຶ້ມຄູ່ມືການວິໄຈສານພິດຕົກຄ້າງ, ການໂຄສະນາເຜີຍແຜ່;
- ຈ່າຍອື່ນໆ ຕາມລະບຽບການເງິນ.

ມາດຕາ 27 ການລົງບັນຊີ ລາຍຮັບ ແລະ ລາຍຈ່າຍ

27.1. ການລົງບັນຊີລາຍຮັບ

ແມ່ນລົງບັນຊີທີ່ໄດ້ຈາກການເກັບຄ່າລາຍຮັບທາງດ້ານວິຊາການເປັນຕົ້ນ ລາຍຮັບຈາກການເກັບຄ່າບໍລິການວິຊາການ, ຄ່າທໍານຽມ, ຄ່າປັບໃໝ, ຈາກງົບປະມານ ແມ່ນລົງບັນຊີລາຍຮັບຕາມລະບຽບ ການຂອງລັດ ທີ່ສອດຄ່ອງຕາມດໍາລັດຂອງກະຊວງການເງິນວາງອອກ.

27.2. ການລົງບັນຊີລາຍຈ່າຍ

ແມ່ນການລົງບັນຊີລາຍຈ່າຍຕົວຈິງເພື່ອນໍາໃຊ້ງົບປະມານເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ເຊິ່ງການລົງບັນຊີລາຍຈ່າຍແມ່ນສອດຄ່ອງຕາມລະບຽບຂອງກະຊວງການເງິນວາງອອກ.

## ໝວດທີ 6

## ຂໍ້ຫ້າມສໍາລັບຜູ້ຜະລິດ, ຈໍາໜ່າຍ ແລະ ຜູ້ບໍລິໂພກ

**ມາດຕາ 28 ຂໍ້ຫ້າມສໍາລັບຜູ້ຜະລິດພືດ ແລະ ຜະລິດຕະພັນພືດ:**

1. ບໍ່ໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ບັນດາຫົວໜ່ວຍທຸລະກິດຕ່າງໆ ນໍາໃຊ້ສານເຄມີ ທີ່ຕ້ອງ ຫ້າມເຂົ້າໃນການຜະລິດພືດ ແລະ ນໍາໃຊ້ສານເຄມີເກີນອັດຕາກໍານົດເຂົ້າໃນການປູກພືດ, ປຸງແຕ່ງ ຜະລິດຕະພັນພືດ;
2. ບໍ່ໃຫ້ຜູ້ຜະລິດພືດ ແລະ ປຸງແຕ່ງຜະລິດຕະພັນພືດນໍາໃຊ້ເຊື້ອຈຸລິນຊີທີ່ເປັນອັນຕະລາຍ ແລະ ກໍ່ໃຫ້ ເກີດຜົນກະທົບຕໍ່ສະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ;
3. ບໍ່ໃຫ້ຜູ້ຜະລິດ ນໍາໃຊ້ແນວພັນພືດທີ່ຕັດແຕ່ງພັນທຸກໍາ (GMO) ມາປູກ ແລະ ຈໍາໜ່າຍໃນ ຕະຫຼາດ;
4. ບໍ່ໃຫ້ນໍາໃຊ້ສະໝຸນໄພທີ່ມີພິດຮ້າຍແຮງ ມາປຸງແຕ່ງເປັນນໍ້າສະກັດສະໝຸນໄພ ເພື່ອນໍາໃຊ້ປ້ອງກັນ ຂັບໄລ່ແມງໄມ້ສັດຕູພືດໃນຟາມ.

**ມາດຕາ 29 ຂໍ້ຫ້າມສໍາລັບຜູ້ປະກອບການຈໍາໜ່າຍພືດ ແລະ ຜະລິດຕະພັນພືດ**

1. ບໍ່ອະນຸຍາດໃຫ້ຈໍາໜ່າຍພືດ ແລະ ຜະລິດຕະພັນພືດ ທີ່ມີສານພິດຕົກຄ້າງໃນລະດັບທີ່ບໍ່ປອດໄພຕໍ່ ຜູ້ບໍລິໂພກ;
2. ບໍ່ອະນຸຍາດໃຫ້ຈໍາໜ່າຍພືດ ແລະ ຜະລິດຕະພັນພືດ ທີ່ເສຍຄຸນນະພາບ ຫຼື ໝົດອາຍຸນໍາໃຊ້;
3. ບໍ່ໃຫ້ນໍາເອົາພືດ ແລະ ຜະລິດຕະພັນພືດທີ່ບັນຈຸ ຫລື ຫຸ້ມຫໍ່ພາຊະນະທີ່ປົນເປື້ອນສານເຄມີ ຫລື ບໍ່ ສະອາດ ຈໍາໜ່າຍ;
4. ບໍ່ອະນຸຍາດໃຫ້ຈໍາໜ່າຍພືດ ແລະ ຜະລິດຕະພັນພືດທີ່ບໍ່ສາມາດຢັ້ງຢືນແຫລ່ງຜະລິດໄດ້;
5. ບໍ່ໃຫ້ຈໍາໜ່າຍພືດ ແລະ ຜະລິດຕະພັນພືດຈາກຕ່າງປະເທດທີ່ນໍາເຂົ້າມາບໍ່ຖືກຕ້ອງຕາມລະບຽບການ;

6. ບໍ່ໃຫ້ຈຳໜ່າຍພືດ ແລະ ຜະລິດຕະພັນພືດທີ່ປົນເປື້ອນເຊື້ອຈຸລິນຊີທີ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ;
7. ນຳໃຊ້ ສານເຄມີທີ່ຊ່ວຍຮັກສາຄວາມສົດ, ເລັ່ງຄວາມຫວານ, ຄວາມກອບ, ຄວາມນຸ່ມ, ສານກຳຈັດແມງໄມ້ສັດຕູພືດຂອງພືດ ແລະ ຜະລິດຕະພັນພືດ ທີ່ບໍ່ຖືກຕ້ອງຕາມຫຼັກວິຊາການ;
8. ສູນກວດກາສາມາດສະກັດກັ້ນ ພືດ ແລະ ຜະລິດຕະພັນພືດ ທີ່ເຫັນວ່າບໍ່ມີຄວາມປອດໄພ ທີ່ຈະນຳເຂົ້າໄປຈຳໜ່າຍ ໃນທ້ອງຕະຫຼາດ, ຮ້ານຄ້າ, ຊຸບເປີມາກເກັດ ແລະ ອື່ນ.

**ມາດຕາ 30 ຂໍ້ຫ້າມສຳລັບຜູ້ບໍລິໂພກ:**

1. ບໍ່ໃຫ້ຜູ້ບໍລິໂພກປົກປິດຄວາມລັບເມື່ອຮູ້ວ່າພືດ ແລະ ຜະລິດຕະພັນພືດນັ້ນມີສານພິດ ຫລື ບໍ່ສະອາດ;
2. ບໍ່ໃຫ້ຊື້ພືດ ແລະ ຜະລິດຕະພັນພືດ ເມື່ອຮູ້ວ່າບໍ່ສະອາດ ແລະ ອາດມີຜົນກະທົບຮ້າຍແຮງຕໍ່ສຸຂະພາບ;
3. ບໍ່ໃຫ້ໂຄສະນາບິດເບືອນ ໃສ່ຮ້າຍປ້າຍສີ ຕໍ່ຜູ້ຜະລິດ ແລະ ຜູ້ຈຳໜ່າຍ ໃນທາງທີ່ບໍ່ຖືກຕ້ອງ ໂດຍບໍ່ມີຂໍ້ມູນຄວາມຈິງ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ:

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຜະລິດພືດສະອາດ ໄດ້ຕາມມາດຕະຖານຖືກຫຼັກໂພຊະນາການ, ການກວດກາຄຸ້ມຄອງຄຸນນະພາບພືດ ແລະ ຜະລິດຕະພັນພືດ ໃນນະຄອນຫຼວງວຽງຈັນ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວຽກງານຕາມພາລະບົດບາດ ຂອງແຕ່ລະຂັ້ນຄຸ້ມຄອງຢ່າງມີປະສິດທິຜົນ ເພື່ອເຮັດໃຫ້ຜູ້ບໍລິໂພກ ມີຄວາມປອດໄພ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຈາກທາງການຕາມຄວາມເໝາະສົມ.

ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ:

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດຂໍ້ຫ້າມຂອງລັດທີ່ລະບຸໄວ້, ລວມທັງໃນຂໍ້ຕົກລົງສະບັບນີ້ ຫາກພົບເຫັນພືດ ແລະ ຜະລິດຕະພັນພືດປົນເປື້ອນສານເຄມີ ໃນລະດັບທີ່ບໍ່ປອດໄພໃຫ້ປະຕິບັດຕາມລະບຽບກົດໝາຍກຳນົດ, ໃນນັ້ນ:

1. ຄັ້ງທີ 1 ໃຫ້ສຶກສາອົບຮົມ ແລະ ແນະນຳພ້ອມທັງຂຽນບົດບັນທຶກ, ທຳລາຍສິນຄ້າຖິ້ມ ແລະ ເຈົ້າຂອງສິນຄ້າຮັບຜິດຊອບຄ່າໃຊ້ຈ່າຍໃນການທຳລາຍ;
2. ຄັ້ງທີ 2 ໃຫ້ກ່າວເຕືອນຄວາມຜິດ ພ້ອມທັງຍຶດສິນຄ້າທັງໝົດແລ້ວທຳລາຍຖິ້ມ ສ່ວນຄ່າໃຊ້ຈ່າຍໃນການທຳລາຍແມ່ນເຈົ້າຂອງສິນຄ້າຮັບຜິດຊອບ ແລະ ປັບໃໝເປັນເງິນ 2 ເທົ່າຂອງມູນຄ່າຜົນຜະລິດທັງໝົດ;

3. ຄັ້ງທີ 3 ຈະໄດ້ຢຶດສິນຄ້າ ແລະ ທຳລາຍຖິ້ມ, ເຈົ້າຂອງສິນຄ້າເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການທຳລາຍຖິ້ມທັງໝົດ, ພ້ອມຄ່າປັບໃໝເປັນເງິນ 5 ເທົ່າຂອງມູນຄ່າຜົນຜະລິດທັງໝົດ, ຍົກເລີກສັນຍາບໍ່ໃຫ້ເຂົ້າຂາຍ ແລະ ຢຸດເຊົາທຸລະກິດຢ່າງຂາດຕົວ;

4. ສຳລັບພະນັກງານລັດທີ່ປະຕິບັດໜ້າທີ່ບໍ່ຖືກຕ້ອງ ຫລື ບໍ່ມີຄວາມເປັນທຳ ໃຫ້ປະຕິບັດຕາມຂັ້ນຕອນ ແລະ ລົງໂທດ ຊຶ່ງກົດໝາຍວ່າດ້ວຍພະນັກງານລັດຖະກອນ ກຳນົດໄວ້ຢ່າງເຂັ້ມງວດ;

## ໝວດທີ 8

## ບົດບັນຍັດສຸດທ້າຍ

### ມາດຕາ 33 ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ຕ້ອງປະສານສົມທົບກັບ ບັນດາພະແນກການອົງການທຽບເທົ່າອ້ອມຂ້າງ, ອົງການປົກຄອງເມືອງ, ບ້ານ, ທຸກພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຕາມຂໍ້ຕົກລົງ ສະບັບນີ້ຢ່າງເຂັ້ມງວດ.

### ມາດຕາ 34 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນ ແລະ ຈັດພິມລົງເຜີຍແຜ່ໃນຈົດໝາຍເຫດທາງລັດຖະການຂອງນະຄອນຫຼວງວຽງຈັນ 60 ວັນ.

ເຈົ້າຄອງນະຄອນຫຼວງວຽງຈັນ

ບ່ອນສົ່ງ:

| | |
|---|---|
| - ເຈົ້າຄອງ-ຮອງເຈົ້າຄອງນະຄອນຫຼວງວຽງຈັນ | 03 ສະບັບ |
| - ທຸກຫ້ອງການກະຊວງ, ອົງການຂອງສູນກາງພັກ | 01 ສະບັບ |
| - ສະພາປະຊາຊົນ ນວ | 01 ສະບັບ |
| - ທຸກພະແນກການ ແລະ ອົງການທຽບເທົ່າອ້ອມຂ້າງ ນວ | 01 ສະບັບ |
| - ທຸກເມືອງອ້ອມຂ້າງ ນວ | 01 ສະບັບ |
| - ເກັບມ້ຽນ | 01 ສະບັບ |

ປອ.ສິນລະວົງ ຄຸດໄພທູນ